# ເອົາຊີວິດຄືນມາຮ່ວມກັນ




“ວິທີທີ່ຜ່ານຜ່າຄວາມຫຸ້ຍງຍາກທີ່ດີທີ່ສຸດ”
*ບໍ່ເປີດເຜີຍນາມ*

“ສິ່ງທີ່ຜານມາ ແລະ ຢູ່ຕໍ່ໜ້າພວກເຮົາແມ່ນເປັນເລື່ອງເລັກນ້ອຍໆ ເມື່ອທຽບໃສ່ກັບສິ່ງທີ່ຢູ່ໃນຕົວເຮົາ.”
*Ralph Waldo Emerson*

**ທີ່ຕັ້ງສຳນັກງານ:**

Family Intervention Program (FIP)
(Family Safety Center)
610 Murfreesboro Pike
Nashville TN 37210




ແຜນງານການຊ່ວຍເຫຼືອຄອບຄົວ (FIP) ແມ່ນຕັ້ງຢູ່ໃນສູນຄວາມປອດໄພຄອບຄົວ. ເມື່ອເຈົ້າມາຮອດ, ລົງທະບຽນເຂົ້າກັບເຈົ້າໜ້າທີ່ຮັກສາຄວາມປອດໄພ.

f.i.p.
FAMILY INTERVENTION PROGRAM

**ສຳລັບການນັດໝາຍໂທ**
(615) 862-7773

ໂຄງການນີ້ໄດ້ຮັບການສະໜັບສະໜູນໂດຍ Award No. 2017-VA-GX-0051 ແມ່ນລາງວັນທີ່ໄດ້ຮັບຈາກ ສຳນັກງານຜູ້ປະສົບໄພຈາກການອາຊະຍາກຳ, ສຳນັກງານຍຸຕິທຳ, ກະຊວງຍຸຕິທຳແຫ່ງສະຫະລັດອາເມລິກາ ຜ່ານອົງການຍຸຕິທຳອາຊະຍາກຳໃນລັດ Tennessee.

Lao

f.i.p.
FAMILY INTERVENTION PROGRAM

## ເມື່ອທ່ານ ຫຼື ໃຜຜູ້ໜຶ່ງທີ່ທ່ານຮູ້ທີ່ສຳຜັດກກກັບອາຊະຍາກຳ

ເມື່ອໃດກໍ່ຕາມ ຖ້າອາຊະຍາກຳເກີດຂຶ້ນ, ຫຼາຍຄົນໄດ້ຮັບຜົນກະທົບ— ຜູ້ຖືກເຄາະຮ້າຍ, ຄົນໃນຄອບຄົວ, ໝູ່ເພື່ອນ ແລະ ທົ່ວຊຸມຊົນ. ບໍ່ມີຜູ້ໃດກຽມພ້ອມສຳລັບຜົນກະທົບທາງຮ່າງກາຍ ແລະ ຈິດໃຈ ຈາກອາຊະຍາກຳ ເຊິ່ງສົ່ງຜົນອັນຕະລາຍຕໍ່ຜູ້ທີ່ໄດ້ຮັບອັນຕະລາຍ ແລະ ຄອບຄົວ ແລະ ໝູ່ເພື່ອນຂອງເຂົາເຈົ້າ. ໄດ້ກ້າວໄປດ້ວຍຄວາມທຸກທໍລະມານທີ່ແທ້ຈິງຂອງຜູ້ຄົນ ຜູ້ທີ່ຊີວິດປະເຊີນກັບອາຊະຍາກຳ, ກົມຕຳຫຼວດ Metropolitan Nashville Police Department (MNPD) ໄດ້ໃຫ້ຄຳປຶກສາ, ສົ່ງເສີມ ແລະ ສະໜັບສະໜູນການບໍລິການຊ່ວຍເຫຼືອຕໍ່ຜູ້ເຄາະຮ້າຍດ້ານອາຊະຍາກຳ ແລະ ຜູ້ອື່ນໆ ທີ່ໄດ້ຮັບຜົນກະທົບຈາກອາຊະຍາກຳຮຸນແຮງຕັ້ງແຕ່ປີ 1975.

## ການຊ່ວຍເຫຼືອມີຢູ່ນີ້ແລ້ວ

ໃນປີ 2016, ສອງໂຄງການໃຫ້ຄຳປຶກສາຂອງ MNPD ແລະ ໂຄງການຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ (VIP) ແລະ ການໃຫ້ຄຳປຶກສາກ່ຽວກັບການໃຊ້ຄວາມຮຸນແຮງໃນຄອບຄົວໄດ້ລວມຕົວກັນກາຍເປັນໂຄງການຊ່ວຍເຫຼືອຄອບຄົວ (FIP). ການບໍລິການເຫຼົ່ານີ້ໄດ້ກໍ່ຕັ້ງຂຶ້ນຕາມແນວຄວາມຄິດທີ່ຜູ້ໃດຜູ້ໜຶ່ງທຸກທົນຕໍ່ການເຈັບປວດຈາກການກະທຳຜິດທາງອາຍາ ຄວນໄດ້ຮັບການເຂົ້າຊ່ວຍເຫຼືອແກ້ໄຂ ແລະ ຕິດຕາມວິກິດໂດຍທັນທີ ແລະ ບໍ່ເສຍຄ່າ. ເຈົ້າໜ້າທີ່ທີ່ໄດ້ຮັບອະນູຍາດໂດຍ ແພດຜູ້ຊ່ຽວຊານດ້ານສຸຂະພາບຈິດ ແລະ ນັກສົ່ງເສີມຜູ້ທີ່ມີຄວາມຮູ້, FIP ແມ່ນມີຄວາມຕັ້ງໃຈທີ່ຈະຊ່ວຍເຫຼືອຜູ້ຄົນທີ່ໄດ້ຮັບຜົນກະທົບຈາກການໃຊ້ຄວາມຮຸນແຮງ ແລະ ຟື້ນຟູຄວາມສະຫງົບສຸກ ແລະ ຄວາມສົມດຸນກັບຄືນມາສູ່ຊີວິດຂອງພວກເຂົາ. ການຕັດສິນໃຈຂອງຜູ້ຖືກເຄາະຮ້າຍກ່ຽວກັບການດຳເນີນຄະດີທີ່ບໍ່ມີຜົນຕໍ່ການມີສິດໄດ້ຮັບ.

ໜ້າທີ່ຂອງ FIP ແມ່ນໃຫ້ການບໍລິການສຸຂະພາບຈິດ ແລະ ສະໜັບສະໜຸນລະບົບຄວາມຍຸຕິທຳ ເມື່ອໃດທີ່ ບຸກຄົນ, ຄອບຄົວ ແລະ/ຫຼື ຊຸມຊົນ ໄດ້ຮັບຜົນກະທົບ ຈາກອາຊະຍາກຳທີ່ຮຸນແຮງ. ການບໍລິການແມ່ນບໍ່ເສຍຄ່າ, ເປັນຄວາມລັບ ແລະ ສະໜອງໃຫ້ໃນສະພາບແວດລ້ອມ ທີ່ສະໜັບສະໜູນຄວາມຫຼາກຫຼາຍວັດທະນະທຳ: ກ່ຽວກັບເຊື້ອຊາດ, ສາສະໜາ ແລະ ຄວາມຫຼາກຫຼາຍທາງເພດ.

## ການບໍລິການທີ່ຫຼາກຫຼາຍ

ພະນັກງານຕອບສະໜອງທາງດ້ານວັດທະນະທຳ ແລະ ດ້ວຍຄວາມເຫັນອົກເຫັນໃຈ ສະໜອງ:

### ການຊ່ວຍເຫຼືອປັບຕົວໃນວິກິດການ

ຕອບທາງໂທລະສັບຕໍ່ຜູ້ຖືກເຄາະຮ້າຍ ແລະ ພົນລະເມືອງໄດ້ຕະຫຼອດ 24 ຊົ່ວໂມງ ລິເລີ່ມໂດຍ ເຈົ້າໜ້າທີ່ຕອບສະໜອງໃຫ້ບໍລິການ, ເມື່ອມີການລາຍງານວ່າ ມີອາຊະຍາກຳ.

### ການໃຫ້ຄຳປຶກສາ

ການບໍລິການໃຫ້ບໍລິການຄຳປຶກສາມືອາຊີບຕໍ່ບຸກຄົນ, ຄົນໃນຄອບຄົວ ແລະ ຜູ້ທີ່ໄດ້ຮັບຜົນກະທົບອື່ນຈາກອາຊະຍາກຳ. ໃຫ້ການສະໜັບສະໜຸນກຸ່ມຜູ້ທີ່ຕົກເປັນເຫຍື່ອ/ປະຊາກອນຜູ້ລອດຊີວິດແມ່ນໃຫ້ຕະຫຼອດປີ.

### ການຕອບສະໜອງຕໍ່ວິກິດການເປັນກຸ່ມ

ການຊ່ວຍເຫຼືອປັບຕົວຕໍ່ວິກິດການທີ່ສະໜອງຕາມການຮ້ອງຂໍ ເມື່ອທຸລະກິດ, ໂຮງຮຽນ ຫຼື ກຸ່ມອື່ນທີ່ໄດ້ຮັບຜົນກະທົບຈາກການໃຊ້ຄວາມຮຸນແຮງ.

### ການສົ່ງເສີມ ແລະ ການຈັດການກໍລະນີ

ຄຳແນະນຳ, ການສະໜັບສະໜຸນ ແລະ ການຊີ້ແຈງໃນທົ່ວຂະບວນການພິຈາລະນາຂອງສານຕຳຫຼວດ ແລະ ຂອງສານ. ມີການໃຫ້ຄວາມຊ່ວຍເຫຼືອເພື່ອຮັບປະກັນຄວາມຄົງດ້ານຄວາມຈຳເປັນພື້ນຖານ ແລະ ຍື່ນຂໍຄ່າຊົດເຊີຍການບາດເຈັບທາງອາຍາ TN.

### ການບໍລິການສະເພາະ

ການສົ່ງເສີມ/ການປະຊາສຳພັນຕອບສະໜອງທາງວັດທະນະທຳສຳລັບປະຊາກອນທີ່ຫຼາກຫຼາຍຂອງ Nashville ລວມເຖິງຜູ້ຊ່ຽວຊານດ້ານຜູ້ລີ້ໄພ ແລະ ຜູ້ອົບພະຍົບ, ພະນັກງານທີ່ເວົ້າໄດ້ສອງພາສາ, ຂໍ້ມູນທີ່ມີຫຼາຍພາສາ ແລະ ການນຳໃຊ້ນາຍປພາສາໃນຍາມຈຳເປັນ.

### ການໃຫ້ຄຳປຶກສາ ແລະ ການເຝິກອົບຮົບ

ມີການໃຫ້ການນຳສະເໜີຜົນງານສຳລັບກຸ່ມຊຸມຊົນ ແລະ ຜູ້ຊ່ຽວຊາ ນເພື່ອເພີ່ມທະວີການຮັບຮູ້ ແລະ ເຂົ້າໃຈໃນການບໍລິການ FIP, ຜົນກະທົບຈາກການໄດ້ຮັບບາດເຈັບ/ຕົກເປັນຜູ້ຖືກເຄາະຮ້າຍ ແລະ ການຕື່ນຕົວທາງວັດທະນາທຳ ແລະ ການຕອບສະໜອງ ສຳລັບປະຊາກອນທີ່ຖືກເຄາະຮ້າຍສະເພາະ.

### ຂໍ້ມູນ ແລະ ການສົ່ງຕໍ່

ການປະສານງານກັບຜູ້ໃຫ້ບໍລິການດ້ານການດູແລເບິ່ງແຍງສຸຂະພາບ, ສັງຄົມສົງເຄາະ ແລະ ລະບົບຄວາມຍຸຕິທຳທາງອາຍາ.

## ມັນແມ່ນການໂທຂອງທ່ານເອງ

ເປົ້າໝາຍຫຼັກຂອງແຜນການຊ່ວຍເຫຼືອການປັບຕົວຂອງຄອບຄົວແແມ່ນເພື່ອຊ່ວຍເຫຼືອບຸກຄົນ ແລະ ຜູ້ອັນເປັນທີ່ຮັກ ຂອງພວກເຂົາ ຮຽກຄືນສຸຂະພາບ ແລະ ຄວາມປັນຢູ່ທີ່ດີພາຍຫຼັງວິກິດ. ຖ້າຫາກທ່ານ ຫຼື ໃຜຜູ້ໜຶ່ງທີ່ທ່ານຮູ້ຕົກເປັນເຫຍື່ອຂອງອາຊະຍາກຳ, ໃຫ້ໂທຫາໝາຍເລກທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້.

### ແຜນງານການຊ່ວຍເຫຼືອການປັບຕົວຂອງຄອບຄົວ

(615) 862-7773

### ເບີໂທຕິດຕໍ່ອື່ນ

ການສືບສວນສອບສວນຂອງເຈົ້າໜ້າທີ່ຕຳຫຼວດ:

| | |
|---|---|
| ເຂດເໜືອ | (615) 862-7901 |
| ເຂດໃຕ້ | (615) 862-7763 |
| ເຂດຕາເວັນອອກ | (615) 862-7525 |
| ເຂດຕາເວັນຕົກ | (615) 862-7385 |
| ເຂດໃຈກາງພູ | (615) 880-1513 |
| ເຂດ Hermitage | (615) 862-6993 |
| ເຂດ Madison | (615) 880-3311 |
| ເຂດສຸນກາງ | (615) 862-7044 |
| ໜ່ວຍງານຄະດີອາຍາທາງເພດ | (615) 862-7540 |
| ພະແນກຄວາມຮຸນແຮງພາຍໃນຄອບຄົວ | (615) 880-3000 |
| ສຳນັກງານໄອຍະການເຂດ | (615) 862-5500 |
| ການຊົດເຊີຍການບາດເຈັບທາງອາຍາ TN | (615) 741-2734 |

**ອີງໃສ່ຢູ່ດ້ານຫຼັງ ສຳລັບແຜນທີ່ ແລະ ທິດທາງ.**

f.i.p.
FAMILY
INTERVENTION
PROGRAM

(615) 862-7773